**Higher School Certificate (HSC) minimum standard**

Information for parents and carers

# ມາດຕະຖານຂັ້ນຕ່ຳສຸດຂອງໃບຮັບຮອງລະດັບມັດທະຍົມສຶກສາຕອນປາຍ(HSC)

## ຂໍ້ມູນສໍາລັບພໍ່ແມ່ ແລະ ຜູ້ດູແລ

ພໍ່ແມ່ ແລະ ຜູ້ດູແລ ທີ່ຮັກແພງ

ການແນະນໍານະໂຍບາຍມາດຕະຖານຂັ້ນຕ່ໍາສຸດຂອງໃບປະກາດສະນີຍາບັດລະດັບມັດທະຍົມສຶກສາ ຕອນປາຍ (HSC) ໂດຍອົງການມາດຕະຖານການສຶກສາຂອງ ຣັດ NSW (NSW Educa-tion Standards Authority(NESA)) ໝາຍຄວາມວ່ານັກຮຽນໃນຣັດ NSW ຈໍາເປັນຕ້ອງໄດ້ສະແດງໃຫ້ເຫັນມາດຕະຖານຂັ້ນຕ່ຳສຸດຂອງການຮູ້ໜັງສືແລະຕົວເລກເພື່ອຈະໄດ້ຮັບໜັງສືຮັບຮອງໃບປະກາດສະນີຍາບັດລະດັບມັດທະຍົມສຶກສາຕອນປາຍ (HSC).

ນັກສຶກສາຈະເຂົ້າສອບເສັງມາດຕະຖານຂັ້ນຕໍ່າສຸດ ຂອງ HSC ໃນສາມຂອບເຂດຂອງການອ່ານ,ການຂຽນ ແລະ ຕົວເລກ. ແຕ່ລະການທົດສອບທາງອອນໄລນ໌ມີຄວາມຍາວ 45 ນາທີແລະມີໂຄງສ້າງດັ່ງຕໍ່ໄປນີ້:

- ການທົດສອບແບບຫຼາຍທາງເລືອກສໍາລັບການອ່ານ;
- ການທົດສອບແບບຫຼາຍທາງເລືອກສໍາລັບຕົວເລກ; ແລະ
- ການທົດສອບການຂຽນ (ເຖິງ 500 ຄໍາ) ໂດຍອີງໃສ່ການກະຕຸ້ນທີ່ເປັນລາຍລັກອັກສອນຫຼືດ້ວຍຮູບພາບ.

ນັກສຶກສາຕ້ອງບັນລຸລະດັບ 3 ຫຼື 4 ໃນຂອບເຂດການທົດສອບທັງສາມເພື່ອໃຫ້ໄດ້ມາດຕະຖານຂັ້ນຕໍ່າສຸດຂອງ HSC. ນີ້ໝາຍຄວາມວ່ານັກຮຽນທີ່ສະແດງມາດຕະຖານມີທັກສະພື້ນຖານທີ່ໃຊ້ໃນຊີວິດປະຈໍາວັນ ສໍາລັບການເຮັດວຽກ ແລະ ການສຶກສາຕໍ່.

ໃນແຕ່ລະປີນັກສຶກສາຈະມີໂອກາດສອບ ເສັງທາງອອນໄລນ໌ເຫຼົ່ານີ້ໄດ້ຫຼາຍຄັ້ງຕັ້ງແຕ່ຊັ້ນ ປີ10 ຈົນເຖິງໃນຕອນທ້າຍຂອງປີ 12. ມີໄລຍະເວລາລໍຖ້າລະຫວ່າງການພະຍາຍາມເຮັດຊໍ້າອີກໃນແຕ່ລະ ການທົດສອບ.

ນັກຮຽນຈະໄດ້ຮັບການສະໜັບສະໜູນຈາກໂຮງຮຽນເພື່ອໃຫ້ເປັນໄປຕາມມາດຕະຖານຂັ້ນຕໍ່າສຸດຂອງ HSC. ມີແບບທົດສອບຝຶກຫັດຢູ່ໃນໂຮງຮຽນ ແລະຄໍາຖາມສາທິດອອນໄລນ໌ຢູ່ໃນເວັບໄຊຕ໌ NESA: [https://educationstandards.nsw.edu.au/wps/portal/nesa/11-12/hsc/hsc-minimum-standard/online-tests](https://educationstandards.nsw.edu.au/wps/portal/nesa/11-12/hsc/hsc-minimum-standard/online-tests)

ກະລຸນາຕິດຕໍ່ໂຮງຮຽນຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ.

ຖ້າທ່ານເຊື່ອວ່າລູກຂອງທ່ານມີຄວາມຕ້ອງການເພີ່ມເຕີມ ແລະ ຈະມີສິດໄດ້ຮັບເງື່ອນໄຂເພີ່ມເຕີມສໍາລັບການທົດສອບມາດຕະຖານຂັ້ນຕໍ່າສຸດ ຂອງ HSC, ກະລຸນາໂທຫາຜູ້ຕິດຕໍ່ຂອງໂຮງຮຽນທີ່ສະແດງຢູ່ຂ້າງລຸ່ມນີ້:

ຊື່ຂອງຜູ້ຕິດຕໍ່ຂອງໂຮງຮຽນ

ເບີໂທລະສັບຂອງຜູ້ຕິດຕໍ່ຂອງໂຮງຮຽນ

ດ້ວຍຄວາມຮັກແພງ

ທ່ານຄູໃຫຍ່

ຊື່ໂຮງຮຽນ

### ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານໃນການຕິດຕໍ່ໂຮງຮຽນ, ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບທີ່ເບີ 131 450 ແລະຂໍເອົານາຍພາສາໃນພາສາຂອງທ່ານ. ບອກຜູ້ຮັບສາຍເບີໂທ ລະສັບທີ່ທ່ານຕ້ອງການທີ່ຈະໂທຫາແລະຜູ້ຮັບສາຍຈະຫານາຍພາສາໃນສາຍເພື່ອຊ່ວຍທ່ານໃນການສົນທະນາ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.